ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 18 ກໍຣະກະດາ 2010 (07-18-2010)

---

## ພລັງຂອງການອ້ອນວອນ:

**ຂໍ້ພຣະຄັມພີໃນບົດຮຽນ:** (1 ຊາມູເອນ 22:11-20; 23:1-6, 9-13)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:**

ບົດຮຽນນີ້ກ່ຽວກັບການຊອກຫາການຊົງນໍາຂອງພຣະເຈົ້າ ໃນທຸກໆ ການຕັດສິນໃຈຂອງດາວິດ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສໍາຄັນ?:**

ຄົນເຮົາ ໃນທຸກວັນນີ້ໄດ້ພາກັນເຝົ້າມອງເບິ່ງຄົນຂອງພຣະເຈົ້າ ແລະພຣະທັມຄໍາສອນຂອງພຣະເຈົ້າດ້ວຍຄວາມດູໝິ່ນປະໝາດ. ຄຣິສຕຽນພວກເຮົາໄດ້ປະເຊີນໜ້າກັບການດູໝິ່ນປະໝາດຈາກຄົນອີກກຸ່ມນຶ່ງ ຍ້ອນຄວາມເຊື່ອຂອງພວກເຂົາເຈົ້າ. ເຖິງຢ່າງໃດກໍຕາມ, ຜູ້ທີ່ມີຄວາມເຊື່ອຄວນສືບຕໍ່ ໃນການສແວງຫານໍ້າພຣະທັຍຂອງພຣະເຈົ້າ ແລະກໍຕິດຕາມການຊົງນໍາຂອງພຣະອົງ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ຈະຊ່ວຍໃຫ້ກໍາລັງໃຈທ່ານ ໃນການສແວງຫານໍ້າພຣະທັຍຂອງພຣະເຈົ້າ ແລະຕິດຕາມການຊົງນໍາຂອງພຣະອົງ ຢ່າງບໍ່ສົນໃຈຕໍ່ຜົນທີ່ຕາມມາພາຍຫລັງ

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນໍາຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈໍາຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສໍາຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນໍາ:**

- ສ້າງຄວາມສົນໃຈໃຫ້ນັກຮຽນມີໃຈຈົດຈໍ່ໃສ່ໃນບົດຮຽນໃນມື້ນີ້.
- "ຄໍາຮ້ອງ: ເປັນໜັງສືຮ້ອງຂໍທີ່ຍື່ນ (ສົ່ງ) ເຖິງເຈົ້າໜ້າທີ່ຜູ້ມີອໍານາດທີ່ອະນຸຍາດໃນເຣື່ອງນັ້ນໆ"
- ໃຫ້ນັກຮຽນອາສາສມັກເລົ່າຕົວຢ່າງຂອງການຂຽນຄໍາຮ້ອງທີ່ເຂົາເຈົ້າໄດ້ຂຽນ ຫລືໄດ້ເຊັນໄປ. ເຊັ່ນ: ຄໍາຮ້ອງຂໍເອົາພີ່ນ້ອງ, ພໍ່ແມ່ມາຈາກປະເທດລາວ, ຂໍເອົາຄູ່ໝັ້ນມາ ແລະອື່ນໆ.....
- ທ່ານຈະເຮັດແນວໃດ ເພື່ອຈະຮຽກຮ້ອງໃຫ້ສັງຄົມມີການປ່ຽນແປງບາງສິ່ງບາງຢ່າງໄດ້?
- ພວກເຮົາຈະຮຽກຮ້ອງຕໍ່ພຣະເຈົ້າໄດ້ໃນທາງໃດ? (ໂດຍຜ່ານທາງການອະທິຖານ)

- ພວກເຮົາຕ້ອງສະແດງບົດບາດແນວໃດ ພຣະເຈົ້າຈຶ່ງຈະຕອບຄຳຮຽກຮ້ອງຂອງພວກເຮົາ?

## 1. <u>ແຜນການຂອງຊາອູນ:</u> (1 ຊາມູເອນ 22:17-20)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ຊາມູເອນ 22:17-20
- ໃຫ້ສົນທະນາກັນເຖິງເຣື່ອງຊາອູນສັ່ງຂ້າພວກປະໂລຫິດ 85 ຄົນນັ້ນ. ແລະຖາມວ່າ ພວກປະໂລຫິດເຫລົ່ານັ້ນໄດ້ມີຄວາມຜິດຫຍັງ? ເຂົາເຈົ້າອາດຈະພາກັນຫລີກລ່ຽງຈາກເຣື່ອງຄາດຕະກັມແບບນີ້ໄດ້ຢ່າງໃດ? ຊຶ່ງໄດ້ຊີ້ໃຫ້ພວກເຮົາເຫັນວ່າ, ພວກເຮົາກໍເປັນເໝືອນພວກປະໂລຫິດເຫລົ່ານີ້, ບາງເທື່ອພວກເຮົາກໍໄດ້ຮັບຄວາມທໍຣະມານ ເຈັບປວດ ທັງໆ ທີ່ພວກເຮົາບໍ່ໄດ້ເຮັດຜິດຫຍັງເລີຍ.
- ກ່ອນຈະເຂົ້າຫ້ອງຮຽນຂໍໃຫ້ເຂົ້າໄປໃນເວບໄຊ ນີ້ www.imb.org ໄປຊອກເອົາເຣື່ອງການທີ່ສະແດງໃຫ້ເຫັນເຖິງຄວາມທົນທຸກທໍຣະມານຍ້ອນຄວາມເຊື່ອຂອງເຂົາເຈົ້າໃນສມັຍປະຈຸບັນຂອງບັນດາຜູ້ທີ່ເຊື່ອ ແລະຂອງພວກມິດເຊັນນາຣີ, ຖ້າໄດ້ຊື່ຂອງເຂົາເຈົ້າກໍຍິ່ງດີ.
- ໃຫ້ນັກຮຽນສົນທະນາກັນເຖິງ ການຕັດສິນໃຈເຮັດຊົ່ວຂອງຊາອູນທີ່ໄດ້ທຳ ຕາມບົດຮຽນທີ່ຜ່ານມາຫລາຍໆຢ່າງ ແລະຈຸດທີ່ລາວເມີນເສີຍຕໍ່ການຢ້ານຢຳພຣະເຈົ້າໃນຊີວິດຂອງລາວນັ້ນເປັນແນວໃດ. ຄວາມຫວັງຂອງຊາອູນທີ່ຕ້ອງທຳໃຫ້ໄດ້ນັ້ນກໍຄືສັງຫານພວກປະໂລຫິດ, ທ່ານຄຶດວ່າແນວໃດ? ມັນໄດ້ສະທ້ອນເຖິງຄວາມສັມພັນຂອງລາວກັບພຣະເຈົ້າແນວໃດແດ່?

## <u>ຄຳຖາມເພື່ອແລກປ່ຽນຄວາມຄຶດເຫັນໃນພຣະຄັມພີ:</u> (1 ຊາມູເອນ 22:17-20)

1. ມີໃຜແດ່, ທີ່ທ່ານຮູ້ວ່າເຂົາເຈົ້າໄດ້ຮັບຄວາມທຸກທໍຣະມານ ດ້ວຍຄວາມເຊື່ອຂອງເຂົາເຈົ້າ?
2. ທ່ານໄດ້ຮັບຄວາມທຸກທໍຣະມານໃນທາງໃດສຳລັບຄວາມເຊື່ອ ຄວາມໄວ້ວາງໃຈຂອງທ່ານທີ່ມີໃນອົງພຣະເຢຊູຄຣິດ? ທ່ານເຮັດເຮັດແນວໃດຕອບແທນ, ຜົນສະທ້ອນທີ່ທ່ານໄດ້ຮັບກັບມາຈາກຄວາມເຊື່ອຂອງທ່ານນັ້ນເປັນແນວໃດ?
3. ທ່ານຈະໜູນຈິດໃຈໃຫ້ກຳລັງໃຈແກ່ຜູ້ທີ່ໄດ້ຮັບຄວາມທຸກທໍຣະມານໂດຍຄວາມເຊື່ອນັ້ນແນວໃດ?
4. ພວກເຮົາສົມຄວນທີ່ຈະອ້ອນວອນທູນຂໍພຣະເຈົ້າໃຫ້ເອົາການທົນທຸກທໍຣະມານອອກໄປຈາກຊີວິດຄຣິສຕຽນ ຫລືບໍ່?

## 2. <u>ດາວິດອ້ອນວອນ:</u> (1 ຊາມູເອນ 23:1-5)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 1 ຊາມູເອນ 23:1-5
- ໃຫ້ບອກກັບນັກຮຽນອີກວ່າ ໃນການສົນທະນາເຖິງເຣື່ອງປວັດສາດຂອງອິສຣາເອນອາທິດທີ່ແລ້ວນີ້.
- ຂີດເສັ້ນແບ່ງໃນກະດານເປັນສອງຄໍລັມ ແລ້ວຂຽນ" ໄປຫາໂກລີອາດ" ແລະອີກຝ່າຍນຶ່ງຂຽນ "ຢ່າໄປຫາໂກລີອາດ" ໃຫ້ນັກຮຽນໃຊ້ປຶ້ມພຣະຄັມພີຂອງເຂົາເຈົ້າ ແລະຈາກປະສົບການຂອງເຂົາເຈົ້າ ໃຫ້ສເນີເຫດຜົນທີ່ດາວິດຄວນຈະໄປຕາມຄຳທີ່ພຣະເຈົ້າບອກ ຫລື ບໍ່ໄປຕາມຄຳຂໍຮ້ອງຂອງປະຊາຊົນ. ໃຫ້ຂຽນຄຳຕອບໃສ່ຄໍລັມນັ້ນ.
- ມີເຫດຜົນບາງຢ່າງທີ່ພວກເຮົາບໍ່ສົມຄວນຊ່ອຍຄົນທີ່ຢູ່ຮອບຂ້າງພວກເຮົານັ້ນ ແມ່ນອັນໃດແດ່?
- ການປະຕິບັດຂອງດາວິດຄື ເຂົ້າເຝົ້າ ທູນຖາມພຣະເຈົ້າກ່ອນ (ຂໍ້ 2). ຕາມທີ່ພວກເຮົາຮູ້ ພວກເຮົາຄວນ
- ພວກເຮົາຕ້ອງຊອກສແວງຫາການຊົງນຳຂອງພຣະເຈົ້າກ່ອນໃນທຸກໆ ບັນຫາແມ່ນບໍ່? ຫລາຍຄັ້ງພວກເຮົາຊອກຫາການຊົງນຳຂອງພຣະເຈົ້າຫລັງຈາກຄວາມຄິດຂອງຕົນເອງ: ພວກເຮົາຄວນຈົດຈຳ

ເຖິງຄວາມແຕກຕ່າງລະຫວ່າງການສແວງຫານ້ຳພຣະທັຍພຣະເຈົ້າ ແລະອ້ອນວອນທູນຂໍພຣະພອນ
ຈາກພຣະອົງຫລັງຈາກພວກເຮົາຕັດສິນໃຈທຳແລ້ວ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 23:1-5

1. ແຈ້ງຂາວ ຊັດເຈນຫລາຍປານໃດທີ່ພຣະເຈົ້າຊົງຕອບດາວິດ? ແລ້ວພຣະເຈົ້າຕອບພວກເຮົາ ໃນເມື່ອພວກເຮົາອ້ອນວອນທູນຂໍການຊົງນຳ ແລະຄຳແນະນຳໃນຊີວິດຂອງພວກເຮົາແຈ້ງປານໃດ?
2. ພວກເຮົາຄວນປຶກສາກັບພຣະເຈົ້າແນວໃດກ່ອນເພື່ອໃຫ້ພຣະເຈົ້າຊ່ອຍແກ້ໄຂບັນຫາສ່ວນຮວມ ແລະສ່ວນຕົວຂອງພວກເຮົາ?
3. ພວກເຮົາຈະເສີມສ້າງໃນທາງໃດໃນຕົວຂອງພວກເຮົາ ເພື່ອຈະໄດ້ເປັນຜູ້ທີ່ຊອກສແວງຫາຄຳແນະນຳຈາກພຣະເຈົ້າກ່ອນຈະຕັດສິນໃຈເຮັດສິ່ງນຶ່ງສິ່ງໃດ?
4. ຜົນສະທ້ອນຈາກການສຶກສາພຣະຄັມພີແຕ່ລະວັນ, ການອະທິຖານ, ການຟັງຄຳແນະນຳຂອງພຣະເຈົ້າ..... ນັ້ນມີຫຍັງແດ່?

## 3 . ພຣະເຈົ້າເປັນຜູ້ຈັດຫາໃຫ້: (1 ຊາມູເອນ 23:6,9-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 23:6,9-13
- ພວກເຮົາກໍເປັນເໝືອນດາວິດ, ສິ່ງສຳຄັນ ແລະຈຳເປັນນັ້ນກໍຄື ພວກເຮົາສົມຄວນທີ່ຕ້ອງສແວງຫາພຣະປະສົງຂອງພຣະເຈົ້າກ່ອນ. ໃຫ້ສົນທະນາກັນເຖິງຄຸນຄ່າໃນການນຳພາຂອງພຣະເຈົ້າ.
- ເປັນດ້ວຍເຫດໃດດາວິດຈຶ່ງມີຄວາມໝັ້ນໃຈວ່າລາວ ແລະຄົນຂອງງລາວຕ້ອງມີຄວາມປອດພັຍຢູ່ໃນເມືອງເກອີລາ?
- ໃນການສແວງຫາສະຕິປັນຍາຈາກພຣະເຈົ້າຂອງດາວິດນັ້ນທ່ານຄິດວ່າແນວໃດ?
- ໃນເຣື່ອງນີ້ໄດ້ເວົ້າເຖິງການເພິ່ງພາອາສັຍພຣະເຈົ້າຂອງດາວິດເອົາໄວ້ວ່າຢ່າງໃດແດ່?
- ພວກເຮົາທຸກຄົນຕ້ອງສືບຕໍ່ໃນການສແວງຫາການຊົງນຳຂອງພຣະເຈົ້າຕລອດຊີວິດຂອງພວກເຮົາ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 23:6,9-13

1. ດາວິດໄດ້ມີປະສົບປະການໃນການຕິດຕາມພຣະເຈົ້າທີ່ໃຫ້ຄວາມສະດວກແກ່ລາວມີທາງໃດແດ່?
2. ໃນທາງໃດທີ່ທ່ານຖືກຮຽກເອີ້ນໃຫ້ອອກໄປເປັນຜູ້ປະກາດແລ້ວຖືກປະຖິ້ມແລະໃຫ້ຄວາມສະດວກ?
3. ອາບີອາທາມີຄວາມເຊື່ອ ໝັ້ນໃຈໃນການອວຍພອນຂອງດາວິດໄດ້ແນວໃດ?

## ພຣະຄັມພີແຫ່ງຄວາມຈິງ

- ການບໍ່ເຊື່ອຟັງ, ການບໍ່ສາຣະພາບຜິດ ຈະນຳພາພວກເຮົາອອກຈາກຫ່າງໄກພຣະເຈົ້າ, ແຕ່ພຣະອົງຈະເຂົ້າມາໃກ້ຊິດເຮົາໃນເມື່ອພວກເຮົາຫາກມີຄວາມເຊື່ອໃນພຣະອົງ.
- ວັທນະທັມຈະປ່ຽນແປງໄດ້, ແຕ່ພຣະຄັມພີບໍ່ເຄີຍດັດແປງ ແລະປ່ຽນແປງຈັກເທື່ອ.
- ເຖິງແມ່ນວ່າພວກເຮົາໄດ້ຮັບການຊົງນຳຈາກພຣະເຈົ້າມາແລ້ວກໍຕາມ, ພວກເຮົາຕ້ອງສືບຕໍ່ໃນການສແວງຫາການຊົງນຳ ແລະການແນະນຳຂອງພຣະເຈົ້າຕລອດໄປ.